ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຄຳແນະນຳ
# ວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ
# ພາຍໃຕ້
# ໂຄງການປ້ອງກັນດິນຟ້າອາກາດ ໂດຍຫລີກລ້ຽງການທຳລາຍປ່າໄມ້ (CliPAD) ຢູ່
# ແຂວງຫົວພັນ

ພຶດສະພາ 2017

german cooperation DEUTSCHE ZUSAMMENARBEIT

ຈັດພິມໂດຍ giz Deutsche Gesellschaft für Internationale Zusammenarbeit (GIZ) GmbH

ຮ່ວມມືໂດຍ: KFW

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແນວລາວສ້າງຊາດ ແຂວງຫົວພັນ

ເລກທີ.........../ນສຂ

ຫົວພັນ, ວັນທີ.........................

# ຄຳແນະນຳ

# ວ່າດ້ວຍ ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

## ໂຄງການປ້ອງກັນດິນຟ້າອາກາດ ໂດຍຫລີກລ້ຽງການທຳລາຍປ່າໄມ້ (CliPAD) ຢູ່ ແຂວງ ຫົວພັນ

ພຶດສະພາ 2017

# ພາກທີ I
# ພາກສະເໜີ

## 1. ຈຸດປະສົງ ແລະ ຄາດໝາຍ.

### 1.1. ຈຸດປະສົງ.

- ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກໃນການສ້າງຄວາມສາມັກຄີທົ່ວປ່ວງຊົນທັງຊາດ ໃນການເຂົ້າຮ່ວມພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.
- ເພື່ອໄກ່ເກ່ຍຂໍ້ຂັດແຍ່ງ, ບັນຫາຕ່າງໆທີ່ເກີດຂື້ນຢູ່ຂັ້ນບ້ານໂດຍໃຫ້ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ຮີດຄອງປະເພນີທີ່ເຄີຍປະຕິບັດກັນມາຢູ່ໃນທ້ອງຖິ່ນ.
- ເພື່ອຮັບປະກັນຄວາມຍຸຕິທໍາ ແລະຄວາມສະເໝີພາບຂອງປະຊາຊົນລາວບັນດາເຜົ່າ.
- ເພື່ອຮັບປະກັນໃຫ້ແກ່ການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ໃນຮູບການແກ້ໄຂຂໍ້ຂັດແຍ່ງ ທີ່ເກີດຂື້ນຢູ່ພາຍໃນບ້ານ ຊຶ່ງອາໃສຜູ່ໄກ່ເກ່ຍມາສຶກສາອົບຮົມ, ປະກອບຄໍາຄິດເຫັນຊອກທາງອອກໃຫ້ແກ່ຄູ່ກໍລະນີ ແນໃສ່ເຮັດໃຫ້ຄູ່ກໍລະນີ ປະນີປະນອມຮູ້ສຶກຕື່ນຕົວ ແລະຕົກລົງບັນຫາຂັດແຍ່ງຮ່ວມກັນໂດຍສັນຕິວິທີ.

### 1.2. ຄາດໝາຍ.

ປະຊາຊົນ, ຄູ່ກໍລະນີ, ບຸກຄົນ, ທີ່ມີຂໍ້ຂັດແຍ່ງ ແລະ ໄດ້ຮັບຜົນກະທົບຈາກບັນຫາໃດໜຶ່ງຊຶ່ງເກີດຂື້ນພາຍໃນບ້ານ ຫຼື ຈາກການປະຕິບັດບັນດາກິດຈະກໍາໄດ້ຮັບການແກ້ໄຂ.

ສ້າງຄວາມເປັນເອກະພາບ, ຄວາມສາມສາມັກຄີຮັກແພງ ຂອງປະຊາຊົນລາວບັນດາເຜົ່າພາຍໃນບ້ານຊຶ່ງເປັນເງື່ອນໄຂ, ທ່າແຮງໃນການສ້າງເສດຖະກິດ ແລະ ພັດທະນາຊີວິດການເປັນຢູ່ໃຫ້ດີຂື້ນ.

ກໍານົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານທີ່ມີລັກສະນະທາງແພ່ງ, ການຄ້າ, ຄອບຄົວ, ການກະທໍາຜິດທາງອາຍາທີ່ມີລັກສະນະເຫຼັກນ້ອຍ, ເບົາບາງ, ທີ່ເກີດຂື້ນພາຍໃນບ້ານ ແນໃສ່ປົກປັກຮັກສາ ແລະ ເສີມຂະຫຍາຍຄວາມສາມັກຄີປອງດອງລະຫວ່າງປະຊາຊົນບັນດາເຜົ່າຢູ່ພາຍໃນບ້ານ, ມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມຍຸຕິທໍາ.

## 2. ນະໂຍບາຍ ແລະ ນິຕິກໍາ.

ປຶ້ມແນະນໍາວ່າດ້ວຍການການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານສະບັບນີ້ສ້າງຂື້ນໂດຍອີງຕາມກົດໝາຍ ແລະ ນິຕິກໍາດັ່ງນີ້:

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003;

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 46/ນຍ, ລົງວັນທີ 29 ກັນຍາ 2009 ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ກັບວຽກງານຍຸຕິທຳຮາກຖານ;
- ອີງຕາມກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສປປ ລາວ ສະບັບເລກທີ 07/ສພຊ ລົງວັນທີ 09 ພະຈິກ 2005.

### 3. ຂອບເຂດການນຳໃຊ້.

ບົດແນະນຳວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານສະບັບນີ້ໃຊ້ເພື່ອໄກ່ເກ່ຍໃນກໍລະນີທີ່ເກີດມີບັນຫາຂໍ້ຂັດແຍ່ງກັນໃນຄອບຄົວ, ບຸກຄົນ, ນິຕິບຸກຄົນ ຫຼື ອົງການໃດໜຶ່ງທີ່ຂຶ້ນກັບຄວາມຮັບຜິດຊອບຂອງບ້ານ.

### 4. ການອະທິບາຍຄຳສັບ.

ຄຳສັບຕ່າງໆທີ່ນຳໃຊ້ໃນບົດແນະນຳວ່າດ້ວຍການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ມີຄວາມໝາຍດັ່ງນີ້:

1) **ຄູ່ກໍລະນີ** ໝາຍເຖິງບຸກຄົນທີ່ມີຂໍ້ຂັດແຍ່ງກັນ ຊຶ່ງປະກອບດ້ວຍ ຝ່າຍຮ້ອງຂໍ ແລະ ຝ່າຍຖືກຮ້ອງຂໍ.

2) **ຂໍ້ຂັດແຍ່ງ** ໝາຍເຖິງຄວາມບໍ່ຖືກຕ້ອງປອງດອງກັນ, ຄວາມບໍ່ເຂົ້າໃຈກັນ, ບໍ່ສາມາດຕົກລົງ ຫຼື ບໍ່ລ່ອງລອຍກັນທີ່ເກີດຂຶ້ນລະຫວ່າງສອງຄົນ ຫຼື ຫຼາຍຄົນ, ບຸກຄົນ ກັບ ການຈັດຕັ້ງ, ຄອບຄົວ ກັບ ຄອບຄົວ ກ່ຽວກັບສາຍພົວພັນທາງແພ່ງ, ການຄ້າ, ຄອບຄົວ, ແຮງງານ ແລະ ອື່ນໆ.

3) **ຂໍ້ຂັດແຍ່ງຂັ້ນບ້ານ** ໝາຍເຖິງຄວາມບໍຖືກຕ້ອງປອງດອງ, ບໍເຂົ້າໃຈກັນ, ບໍສາມາດຕົກລົງກັນໄດ້ທີ່ເກີດຂຶ້ນລະຫວ່າງປະຊາຊົນບັນດາເຜົ່າຢູ່ພາຍໃນບ້ານ, ລະຫວ່າງບ້ານຕໍ່ບ້ານ ແລະ ໄດ້ຮັບຜົນກະທົບບັນຫາໃດໜຶ່ງຈາກບັນດາກິດຈະກຳຕ່າງໆທີ່ເກີດຂຶ້ນຢູ່ໃນຄວາມຮັບຜິດຊອບຂອງບ້ານ (ຕາມການສະເໜີຂອງຝ່າຍໃດຝ່າຍໜຶ່ງ).

4) **ການປະນີປະນອມ** ໝາຍເຖິງການຜ່ອນສັ້ນຜ່ອນຍາວເຊິ່ງກັນ ແລະ ກັນ.

5) **ການສຶກສາອົບຮົມ** ໝາຍເຖິງການແນະນຳ, ຕັກເຕືອນ ແລະ ການຊີ້ຊ່ອງທາງທີ່ດີໃຫ້ຄູ່ກໍລະນີຕົກລົງກັນໄດ້.

6) **ຜູ້ໄກ່ເກ່ຍ** ໝາຍເຖິງບຸກຄົນທີ່ໄດ້ຮັບການຄັດເລືອກຈາກປະຊາຊົນພາຍໃນບ້ານໃຫ້ເຮັດໜ້າທີ່ເປັນຄົນກາງໃນການໄກ່ເກ່ຍຂໍ້ຂັດແຍ່ງດ້ວຍການສຶກສາອົບຮົມ, ປະນີປະນອມຄູ່ກໍລະນີ.

7) **ຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ** ໝາຍເຖິງຜູ້ໄກ່ເກ່ຍທີ່ໄດ້ຮັບການເລືອກຕັ້ງຈາກປະຊາຊົນ ແລະ ໄດ້ຮັບການແຕ່ງຕັ້ງໂດຍອົງການປົກຄອງຂອງບ້ານໃຫ້ເປັນຄະນະໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.

8) **ປະຊາຊົນ** ໝາຍເຖິງພົນລະເມືອງລາວ, ຄົນຕ່າງປະເທດທີ່ດຳລົງຊີວິດຢູ່ ສປປ ລາວ;

9) **ຄຳຮ້ອງຂໍ ຫຼື ຄຳສະເໜີ** ໝາຍເຖິງເອກະສານ ຫຼື ເນື້ອໃນຂອງຂໍ້ຂັດແຍ່ງທີ່ຄູ່ກໍລະນີໄດ້ຍື່ນຕໍ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ;

10)**ບົດບັນທຶກການໄກ່ເກ່ຍ** ໝາຍເຖິງບົດບັນທຶກຜົນ ຂອງການໄກ່ເກ່ຍຂໍ້ຂັດແຍ່ງທີ່ຄູ່ກໍລະນີໄດ້ຕົກລົງກັນ ຫຼື ບໍ່ສາມາດຕົກລົງກັນໄດ້.

**5. ປະເພດຂອງຄຳຮ້ອງທຸກ.**

ຄຳຮ້ອງທຸກແມ່ນເອກະສານຂອງພົນລະເມືອງ ຫຼື ການຈັດຕັ້ງ ທີ່ຍື່ນຕໍ່ອົງການທີ່ກ່ຽວຂ້ອງ ເພື່ອພິຈາລະນາແກ້ໄຂກ່ຽວກັບການກະທຳ ຫຼື ການຕົກລົງໃດໜຶ່ງ ຂອງການຈັດຕັ້ງ ຫຼື ບຸກຄົນທີ່ເຫັນວ່າເປັນການລະເມີດລະບຽບກົດໝາຍ ແລະ ແຕະຕ້ອງເຖິງຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຕົນ.

- ຄຳຮ້ອງທຸກມີສາມປະເພດຄື;
- ຄຳຮ້ອງທຸກທີ່ຍື່ນຕໍ່ອົງການບໍລິຫານລັດ ເອີ້ນວ່າ ຄຳສະເໜີ (ເຖິງອົງການປົກຄອງບ້ານ, ເມືອງ, ແຂວງ ແລະ ລັດຖະບານ).
- ຄຳຮອ້ງທຸກທີ່ຍື່ນຕໍ່ອົງການສືບສວນ-ສອບສວນ, ອົງການໄອຍະການ ຫຼື ສານ ເອີ້ນວ່າ ຄຳຮ້ອງຟ້ອງ (ຕາມລຳດັບຂັ້ນ).
- ຄຳຮ້ອງທຸກທີ່ຍື່ນຕໍ່ສະພາແຫ່ງຊາດ ເອີ້ນວ່າ ຄຳຮ້ອງຂໍຄວາມເປັນທຳ (ຕາມລຳດັບຂັ້ນ).

## ພາກທີ II
## ຫຼັກການພື້ນຖານຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

**1. ຫຼັກການພື້ນຖານຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.**

1) ຮັບປະກັນຄວາມຍຸຕິທຳ ແລະ ຖືກຕ້ອງຕາມລະບຽບກົດໝາຍ.
2) ການສຶກສາອົບຮົມ.
3) ການດຳເນີນຢ່າງໂປ່ງໃສເປີດເຜີຍ ແລະ ຊ້ອງໜ້າຄູ່ກໍລະນີທັງໝົດ.
4) ຄວາມເປັນເອກະລາດ ແລະ ເປັນກາງຂອງຜູ່ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.
5) ຄວາມຍຸຕິທຳຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.
6) ຄວາມສະໝັກໃຈຂອງຄູ່ກໍລະນີໃນການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.
7) ການເຄົາລົບສິດ ແລະ ເສລີພາບຕາມກົດໝາຍຂອງຄູ່ກໍລະນີ.
8) ພາສາທີ່ມານຳໃຊ້ເຂົ້າໃນການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານຕ້ອງແມ່ນພາສາຄູ່ກໍລະນີ.
9) ການຄ້ານ ແລະ ຖອນຕົວຜູ່ໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ (ຖ້າເກີດມີກໍລະນີການລຳອຽງຂອງຜູ້ໄກ່ເກ່ຍຄະນະໄກ່ເກ່ຍສາມາດຄັດຄ້ານ ແລະ ຖອດຕົວຜູ້ກ່ຽວ ໂດຍອີງໃສ່ສຽງສ່ວນຫຼາຍຂອງຄະນະດັ່ງກ່າວ).
10) ການບັນທຶກການໄກ່ເກ່ຍຂໍ້ຂັດແຍ່ງໃຫ້ນຳໃຊ້ພາສາລາວ.

## 2. ຂັ້ນຕອນຂອງການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.

1) ກັບຄອບຄົວ: ຜູ້ຮ້ອງຂໍຕ້ອງປຶກສາຫາລືກັບຄອບຄົວ, ພີ່ນ້ອງ, ຜູ້ຊົງຄຸນວຸດທິຂອງຕົນ ແລະ ເຈລະຈາໄກ່ເກ່ຍກັບຄູ່ກໍລະນີແບບຄອບຄົວກ່ອນ;
2) ເມື່ອຄູ່ກໍລະນີບໍ່ສາມາດຕົກລົງກັນໄດ້ ຕ້ອງແຈ້ງຕໍ່ຄະນະໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ເພື່ອຊ່ວຍຊີ້ນຳແກ້ໄຂຕາມລະບຽບການ;
3) ເມື່ອໜ່ວຍງານໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານຫາກບໍ່ສາມາດໄກ່ເກ່ຍຂໍ້ຂັດແຍ່ງໄດ້ ຕ້ອງແນະນຳໃຫ້ຄູ່ກໍລະນີຍື່ນຄຳສະເໜີ, ຄຳຮ້ອງຟ້ອງ ແລະ ຄຳຮ້ອງຂໍຄວາມເປັນທຳຕໍ່ອົງການຈັດທີ່ກ່ຽວຂ້ອງຕາມຂັ້ນຕອນ.

## 3. ໂຄງປະກອບການຈັດຕັ້ງຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.

| | |
|---|---|
| 1) ປະທານ ຫຼື ຮອງປະທານແນວລາວຊ້າງຊາດ | ປະທານ |
| 2) ນາຍບ້ານ ຫຼື ຮອງນາຍບ້ານ | ຮອງປະທານ |
| 3) ສະຫະພັນແມ່ຍິງບ້ານ | ຄະນະ |
| 4) ປກສ ບ້ານ (ກຸ່ມບ້ານ, ເຂດ) | ຄະນະ |
| 5) ສະຫະພັນນັກຮົບເກົ່າບ້ານ | ຄະນະ |
| 6) ຄະນະຊາວໜຸ່ມບ້ານ | ຄະນະ |
| 7) ຜູ້ຊົງຄຸນວຸດທິພາຍໃນບ້ານ | ຄະນະ |

ກໍລະນີປະຊາຊົນຫາກບໍ່ເຂົ້າໃຈພາສາລາວຄວນໃຫ້ມີຜູ້ແປພາສາຊົນເຜົ່າ, ຖ້າວ່າປະຊາຊົນບໍ່ເຂົ້າໃຈທາງດ້ານກົດໝາຍຕ້ອງມີຜູ້ຮູ້ກົດໝາຍຊ່ວຍອະທິບາຍທາງດ້ານກົດໝາຍ.

## 4. ວິທີແກ້ໄຂຂໍ້ຂັດແຍ່ງຢູ່ບ້ານ.

1) ພາຍຫຼັງທີ່ໄດ້ຮັບ ແລະ ສຶກສາຄຳສະເໜີຂອງຄູ່ກໍລະນີແລ້ວ ໜ່ວຍງານໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານຈຶ່ງເຊີນຄູ່ກໍລະນີເພື່ອມາໃຫ້ຄວາມຈະແຈ້ງກ່ຽວກັບບັນຫາດັ່ງກ່າວ.
2) ທວງເອົາເອກະສານທີ່ກ່ຽວຂ້ອງທັງໝົດຈາກຄູ່ກໍລະນີ ເພື່ອໃຊ້ເປັນບ່ອນອີງໃນການໄກ່ເກ່ຍ.
3) ດຳເນີນການໄກ່ເກ່ຍໃຫ້ທັນເວລາ, ຖືກຕ້ອງສອດຄ່ອງຕາມຫຼັກການ ແລະ ລະບຽບກົດໝາຍ ໂດຍຜ່ານຂະບວນການແບບປະນີປະນອມກັນ ແລະ ມີຄວາມຍຸຕິທຳ.
4) ຫຼັງຈາກມີຂໍ້ຕົກລົງເປັນເອກະພາບກັນແລ້ວ, ຄະນະໄກ່ເກ່ຍຂໍ້ຂັດແຍ່ງຕ້ອງແຈ້ງຜົນໃຫ້ຄູ່ກໍລະນີຮັບຊາບ ເພື່ອຢືນຢັນເຖິງຄວາມຖືກຕ້ອງຈຶ່ງເຮັດບົດບັນທຶກ ແລະ ລົງລາຍເຊັນນຳກັນຊຶ່ງມີຄະນະຊີ້ນຳທັງໝົດ ແລະ ຄູ່ກໍລະນີ. ໃນກໍລະນີທີ່ມີຜູ້ບໍ່ຮູ້ໜັງສືກໍໃຫ້ຈ້ຳໂປ້ມືໃສ່ບ່ອນລາຍເຊັນ.

5) ສ່ວນຄ່າສິນເປືອງທັງໝົດໃນຂະບວນການໄກ່ເກ່ຍຂໍ້ຂັດແຍ່ງນີ້ແມ່ນເຈົ້າຂອງກິດຈະກຳທີ່ເປັນສາເຫດຂອງຂໍ້ຂັດແຍ່ງເປັນຜູ້ຮັບຜິດຊອບ.

**5. ນະໂຍບາຍກ່ຽວກັບການໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ.**

1) ລັດມີນະໂຍບາຍຊຸກຍູ້ ແລະ ສົ່ງເສີມໃຫ້ມີການແກ້ໄຂດ້ວຍວິທີການໄກ່ເກ່ຍ ໂດຍປຶກສາຫາລືບົນພື້ນຖານຄວາມປະນີປະນອມຢູ່ຂັ້ນບ້ານ, ເພື່ອເສີມຂະຫາຍມູນເຊື້ອອັນດີງາມ, ຄວາມຮັກແພງ, ຄວາມສາມັກຄີປອງດອງເປັນປຶກແຜ່ນ ຂອງປະຊາຊົນບັນດາເຜົ່າຢູ່ພາຍໃນບ້ານ.
2) ເປັນເງື່ອນໄຂ ແລະ ອຳນວຍຄວາມສະດວກໃຫ້ໜ່ວຍງານໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ສາມາດເຄື່ອນໄຫວປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມທີ່ໄດ້ກຳນົດໄວ້ໃນບົດແນະນຳສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ.
3) ບຸກຄົນ, ການຈັດຕັ້ງ ແລະ ຜູ້ໄກ່ເກ່ຍຂໍ້ຂັດແຍ່ງທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດການໄກ່ເກ່ຍຂໍ້ຂັດແຍ່ງພາຍໃນບ້ານແມ່ນຈະໄດ້ຮັບການປະຕິບັດນະໂຍບາຍຍ້ອງຍໍ, ຊົມເຊີຍ ແລະ ອື່ນໆຕາມຜົນງານຕົວຈິງ.

**6. ມາດຕະການຕໍ່ຜູ່ລະເມີດ.**

ບຸກຄົນ, ການຈັດຕັ້ງ ແລະ ຜູ້ໄກ່ເກ່ຍຂໍ້ຂັດແຍ່ງທີ່ໄດ້ລະເມີດບົດແນະນຳສະບັບນີ້ຈະໄດ້ຮັບການສຶກສາອົບຮົມ, ປະຕິບັດວິໄນ ຫຼື ຖືກລົງໂທດທາງອາຍາຕາມແຕ່ກໍລະນີໜັກ ຫຼື ເບົາ ແລະ ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**7. ການຈັດຕັ້ງປະຕິບັດຕິດຕາມກວດກາ ແລະ ປະເມີນຜົນ.**

**7.1 ການຕິດຕາມກວດກາ.**

ເມື່ອບົດແນະນຳຫາກໄດ້ຮັບການປະຕິບັດແລ້ວຈະຕ້ອງມີການຕິດຕາມກວດກາຈາກພາກສ່ວນທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດບົດແນະນຳສະບັບນີ້ຄື: ອົງການປົກຄອງບ້ານ, ຄະນະໜ່ວຍໄກ່ເກ່ຍ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໂດຍໃຫ້ລາຍງານໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງຂັ້ນເທິງທຸກໆເດືອນຢ່າງເປັນປົກກະຕິ.

**7.2. ປະເມີນຜົນ.**

ພາຍຫລັງທີ່ໄດ້ນຳໃຊ້ບົດແນະນຳສະບັບນີ້ໄປໄລຍະໜຶ່ງປີຕ້ອງມີການປະເມີນຜົນເພື່ອສຳຫຼວດກວດກາ ການຈັດຕັ້ງປະຕິບັດທັງໝົດຄືນເພື່ອໃຫ້ເຫັນດ້ານດີ, ຂໍ້ບົກຜ່ອງ ແລະ ຊ່ອງຫວ່າງຂອງຄຳແນະນຳແນໃສ່ ປັບປຸງແກ້ໄຂໃຫ້ຄົບຖ້ວນ ແລະ ສົມບູນຂຶ້ນ.

ພາກສ່ວນທີ່ຮັບຜິດຊອບກ່ຽວກັບການປະເມີນຜົນນີ້ ແມ່ນສູນກາງແນວລາວສ້າງຊາດເປັນຫລັກ ໂດຍມີ ການເຂົ້າຮ່ວມຂອງອົງການປົກຄອງ, ແນວລາວສ້າງຊາດ, ສະຫະພັນແມ່ຍິງທ້ອງຖິ່ນ (ແຂວງ, ເມືອງ, ບ້ານ).

**7.3. ລາຍງານ.**

ການລາຍງານຕ້ອງໃຫ້ຖືກຕ້ອງຕາມຄວາມເປັນຈິງໃນການແກ້ໄຂໄກ່ເກ່ຍຂັ້ນບ້ານຕົວຈິງ ແລະ ລາຍງານຢ່າງເປັນປົກກະຕິໃຫ້ແກ່ຄະນະຮັບຜິດຊອບ ໂດຍບ້ານຈະເປັນຜູ້ລາຍງານຕໍ່ເມືອງ, ເມືອງລາຍງານໄປຫາແຂວງ ແລະ ແຂວງລາຍງານໄປຫາສູນກາງຕາມແຕ່ລະຂັ້ນຕອນ.

## ພາກທີ III
## ຂໍ້ກຳນົດສຸດທ້າຍ

**1. ການຈັດຕັ້ງປະຕິບັດ.**

ມອບໃຫ້ແນວລາວສ້າງຊາດເມືອງ-ບ້ານປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງອື່ນໆ ພ້ອມກັນຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດບົດແນະນຳສະບັບນີ້ຢ່າງມີປະສິທິຜົນ.

**2. ຜົນບັງຄັບໃຊ້.**

ຄຳແນະນຳສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ວັນທີລົງລາຍເຊັນເປັນຕົ້ນໄປ.

ຫົວພັນ, ວັນທີ..........2017

ຮອງປະທານແນວລາວສ້າງຊາດແຂວງ

ວີເຕັ່ງ ຈີ່ໄມເຕັ່ງ